**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມຂົນສົ່ງ

ເລກທີ: 12059 /ກຂສ

ນະຄອນຫຼວງວຽງຈັນ: 24/9/2008

ຮຽນ : ທ່ານຫົວໜ້າກົມແຜນການ ແລະ ການຮ່ວມມື.

ເລື່ອງ : ປະກອບຄຳເຫັນຕໍ່ຮ່າງແຈ້ງການຂອງ ທ່ານ ລມຕ ກະຊວງ ໂຍທາທິການ ແລະຂົນສົ່ງ,ກ່ຽວກັບບັນຊີ ແລະເງື່ອນໄຂການລົງທຶນໃນຂະແໜງຂົນສົ່ງ.

- ອີງຕາມ ສະໂນດ ນຳສົ່ງຂອງ ກົມແຜນການ ແລະ ການຮ່ວມມື ສະບັບເລກທີ : 00407/ຍທຂ-ຜຮ ລົງວັນທີ : 10/01/2008.

ກົມຂົນສົ່ງ ໄດ້ພິຈາລະນາ ຮ່າງແຈ້ງການທີ່ ກົມແຜນການ ແລະ ການຮ່ວມມື ຮ່າງຂຶ້ນມານີ້ແລ້ວ ແລະ ມີຄຳເຫັນປະກອບດັ່ງນີ້ : <u>ບັນຊີການດຳເນີນທຸລະກິດຂະແໜງຂົນສົ່ງເປີດມີເງື່ອນໄຂ</u>

| ລ/ດ | ເລກ ລະຫັດ | ລາຍການໜ້າວຽກ | ຮູບການ | ເງື່ອນໄຂ |
|---|---|---|---|---|
| | ທຸລະກິດກ່ຽວກັບການຂົນສົ່ງທາງບົກ | | | |
| 1 | | • <u>ການດຳເນີນທຸລະກິດ ຂົນສົ່ງໂດຍສານ</u><br>- ພາຍໃນ ປະເທດ (ລະຫວ່າງເມືອງ-ແຂວງ) | ສະຫງວນ ໄວ້ສະເພາະ ຄົນ ລາວ | - ໄດ້ຮັບອະນຸຍາດໃຫ້ແລ່ນລົດໃນສາຍທາງໃດໜຶ່ງ ຈາກ ພະແນກ ຍທຂ ຕົ້ນທາງພາຍຫຼັງໄດ້ຮັບການ-ຄົ້ນຄວ້າ ແລະ ເຫັນ ດີຈາກຄະນະຄຸ້ມຄອງສາຍທາງ .<br>- ມີວິຊາການ ຮຽນຈົບດ້ານການຂົນສົ່ງ ຊັ້ນສູງ ຈຳນວນ 2 ຄົນ, ໃນນັ້ນ 1 ຄົນ ຕ້ອງມີ ປະສົບການດ້ານການຂົນສົ່ງ ໂດຍສານ ຢ່າງໜ້ອຍ 5 ປີ;<br>- ຕ້ອງມີທຶນຈົດທະບຽນຢ່າງຕ່ຳ 1 ຕື້ ກີບ,ມີລົດຂົນສົ່ງ ສິນຄ້າ ຢ່າງຕ່ຳ 5 ຄັນ;<br>- ຜູ້ຈະເຮັດວິສາຫະກິດ ຕ້ອງແມ່ນພົນລະເມືອງລາວ,ຄົນຕ່າງດ້າວ ທີ່ດຳລົງຊີວິດຢ່າງຖາວອນຢູ່ ສປປ ລາວ . |
| | | - ລະຫວ່າງປະເທດ | ສະຫງວນ ໄວ້ສະເພາະ ຄົນລາວ | - ຕ້ອງໄດ້ຮັບອະນຸຍາດໃຫ້ແລ່ນລົດໃນສາຍທາງໃດໜຶ່ງ ຈາກ ກະຊວງໂຍທາທິການແລະຂົນສົ່ງພາຍຫຼັງໄດ້ຮັບ ການພິຈາລະນາແລະເຫັນດີ ຈາກປະເທດທີ່ກ່ຽວຂ້ອງ ກັບສາຍທາງ ໂດຍສານ.<br>- ຕ້ອງແມ່ນບໍລິສັດຂົນສົ່ງໂດຍສານພາຍໃນໄດ້ເຄື່ອນໄຫວຢ່າງມີປະສິດຕິຜົນມາແລ້ວຢ່າງໜ້ອຍ3 ປີ.<br>- ຕ້ອງມີທຶນຈົດທະບຽນຢ່າງຕ່ຳ 3 ຕື້ ກີບ, ມີລົດຂົນສົ່ງໂດຍ |

| | | | | |
|---|---|---|---|---|
| | | | | ສານທີ່ໄດ້ມາດຕະຖານແລະມີຈຳນວນພຽງພໍ ຕາມທີ່ໄດ້ ຕົກລົງກັນກັບຕ່າງປະເທດສຳລັບການຂົນສົ່ງໃນສາຍທາງນັ້ນ. |
| 2 | | • **<u>ການດຳເນີນທຸລະກິດຂົນສົ່ງສິນຄ້າ</u>**<br><br>- ພາຍໃນ ປະເທດ | ເປີດມີເງື່ອນໄຂ | - ມີວິຊາການ ຮຽນຈົບດ້ານການຂົນສົ່ງ ຊັ້ນສູງ ຈຳນວນ 2 ຄົນ, ໃນນັ້ນ 1 ຄົນ ຕ້ອງມີປະສົບການດ້ານ ການຂົນສົ່ງ ຢ່າງ ໜ້ອຍ 5 ປີ;<br>- ຕ້ອງມີທຶນຈົດທະບຽນຢ່າງຕ່ຳ 1 ຕື້ ກີບ,ມີລົດຂົນສົ່ງສິນ ຄ້າ ຢ່າງຕ່ຳ 5 ຄັນ;<br>- ຖ້າແມ່ນວິສາຫະກິດທີ່ມີການລົງທຶນພາຍໃນ,ເຈົ້າຂອງ ວິສາຫະກິດ ຕ້ອງແມ່ນພົນລະເມືອງລາວ,ຄົນຕ່າງດ້າວ ທີ່ດຳລົງຊີ ວິດຢູ່ ສປປ ລາວ ຢ່າງຖາວອນ;<br>- ຖ້າແມ່ນຄົນຕ່າງປະເທດມາລົງທຶນຕ້ອງສ້າງເປັນວິ ສາ ຫະກິດ ປະສົມກັບຜູ້ລົງທຶນພາຍໃນຊຶ່ງຜູ້ລົງທຶນຕ່າງປະເທດສາມາດຈົດທະບຽນໄດ້ສູງສຸດ 49%. |
| | | - ລະຫວ່າງປະເທດ, ຂ້າມປະເທດ | ເປີດມີເງື່ອນໄຂ | - ມີວິຊາການດ້ານການຂົນສົ່ງຊັ້ນສູງຈຳນວນ2 ຄົນ, ໃນນັ້ນ 1 ຄົນ ຕ້ອງມີປະສົບການດ້ານການຂົນສົ່ງລະຫວ່າງປະເທດ ຢ່າງ໌ ໜ້ອຍ5 ປີ;<br>- ຕ້ອງມີທຶນຈົດທະບຽນຢ່າງຕ່ຳ 3 ຕື້ ກີບ, ມີລົດຂົນສົ່ງສິນຄ້າຢ່າງຕ່ຳ 10 ຄັນ;<br>- ຖ້າແມ່ນຄົນຕ່າງປະເທດມາລົງທຶນໃນຂະແໜງການນີ້ ຕ້ອງສ້າງເປັນວິສາຫະກິດປະສົມກັບຜູ້ລົງທຶນ ພາຍໃນ, ຊຶ່ງຜູ້ລົງທຶນພາຍໃນຕ້ອງຖືຮຸ້ນຫຼາຍກວ່າ50% ຂອງທຶນ ທັງໝົດ ແລະ ສິດໃນການບໍລິຫານວິສາຫະກິດ ຕ້ອງຕົກ ເປັນຂອງຜູ້ລົງທຶນພາຍໃນເປັນສ່ວນຫຼາຍ. |
| 3 | | • **<u>ການດຳເນີນທຸລະກິດບໍລິການຈັດສົ່ງສິນຄ້າ</u>**<br><br>- ວິສາຫະກິດບໍລິການຈັດສົ່ງສິນຄ້າ (Freight Forwarder) | ເປີດມີເງື່ອນໄຂ | - ມີວິຊາການດ້ານການຂົນສົ່ງຊັ້ນສູງຢ່າງໜ້ອຍຈຳນວນ 2 ຄົນ, ໃນນັ້ນ 1 ຄົນ ຕ້ອງໄດ້ຜ່ານ ການຝຶກອົບຮົບທີ່ມີການຢັ້ງ ຢືນຈາກ ກົມຂົນສົ່ງ ຫຼື ອົງການຈັດຕັ້ງສາກົນ ແລະ ມີປະສົບ ການດ້ານການບໍລິຫານການຈັດສົ່ງສິນຄ້າຢ່າງໜ້ອຍ 5 ປີ;<br>- ຕ້ອງມີທຶນຈົດທະບຽນຢ່າງຕ່ຳ 3 ຕື້ ກີບ.<br>- ຖ້າແມ່ນ ຄົນຕ່າງປະເທດມາລົງທຶນໃນຂະແໜງການນີ້ ຕ້ອງສ້າງເປັນວິສາຫະກິດ ປະສົມ ກັບຜູ້ລົງທຶນພາຍໃນ, ຊຶ່ງ ຜູ້ລົງທຶນພາຍໃນຕ້ອງຖືຮຸ້ນຫຼາຍກວ່າ 50% ຂອງ ທຶນທັງໝົດ ແລະ ສິດໃນການບໍລິຫານວິສາຫະກິດຕ້ອງ ຕົກ ເປັນຂອງ ຜູ້ລົງທຶນພາຍໃນເປັນສ່ວນຫຼາຍ. |
| | | | | - ມີວິຊາການດ້ານການຂົນສົ່ງຊັ້ນສູງຢ່າງໜ້ອຍຈຳນວນ 2 ຄົນ,ໃນນັ້ນ 1 ຄົນ ຕ້ອງໄດ້ຜ່ານ ການຝຶກອົບຮົມດ້ານ ໂລຈິສະຕິກທີ່ມີການຢັ້ງຢືນຈາກອົງການຈັດຕັ້ງສາກົນ ແລະມີປະ |

| | | | | |
|---|---|---|---|---|
| | | - ວິສາຫະກິດບໍລິການຈັດສົ່ງສິນຄ້າແບບໂລຈິສຕິກ ( Logistics ) | ເປີດມີເງື່ອນໄຂ | ສິບ ການດ້ານການບໍລິຫານການຈັດສົ່ງສິນ ຄ້າແບບ ໂລຈິສະຕິກ ຢ່າງໜ້ອຍ 3 ປີ ຫຼື ການດ້ານ ການບໍລິຫານການບໍລິການຈັດສົ່ງສິນຄ້າລະຫວ່າງປະເທດ ຢ່າງໜ້ອຍ 5 ປີ.<br>- ຕ້ອງມີທຶນຈົດທະບຽນຢ່າງຕ່ຳ 6 ຕື້ ກີບ.<br>- ຢ່າງໜ້ອຍຕ້ອງມີເຕັກໂນໂລຊີ ດ້ານການບໍລິການປະກອບເອກະສານ,ການເຕົ້າໂຮມສິນຄ້າ,ການ ຫຸ້ມຫໍ່,ການບັນຈຸ,ການເກັບຮັກສາ ແລະ ການແຈກຢາຍ ເພື່ອຮັບໃຊ້ໃຫ້ແກ່ການຈັດສົ່ງສິນຄ້າແບບໂລຈິສະຕິກ ແລະ ໄດ້ຖືກຮັບຮອງຈາກ ກະຊວງ ຍທຂ.<br>- ຖ້າແມ່ນ ຄົນຕ່າງປະເທດມາລົງທຶນໃນຂະແໜງການນີ້ ຕ້ອງສ້າງເປັນວິສາຫະກິດ ປະສົມ ກັບຜູ້ລົງທຶນພາຍໃນ, ຊຶ່ງຜູ້ລົງທຶນຕ່າງປະເທດສາມາດຖືຮຸ້ນໄດ້ບໍ່ເກີນ70%. |
| 4 | | • <u>ການດຳເນີນທຸລະກິດບໍລິການເຊົ່າລົດ</u><br>- ບໍລິການໃຫ້ເຊົ່າລົດ ແລະ ກົນຈັກໜັກ | ເປີດມີເງື່ອນໄຂ | - ຕ້ອງມີວິຊາການດ້ານຂົນສົ່ງຊັ້ນສູງຂຶ້ນໄປ20%ຂອງ ຈຳນວນພະນັກງານທັງໝົດ,ນຳໃຊ້ວິຊາການຄົນລາວ.<br>- ຕ້ອງມີທຶນຈົດທະບຽນຢ່າງໜ້ອຍ1.5ຕື້ກີບຂຶ້ນໄປ, ສຳລັບລົງທຶນ ພາຍໃນ ແລະ 3 ຕື້ກີບຂຶ້ນໄປ ສຳລັບການລົງທຶນຕ່າງປະເທດ.<br>- ຖ້າລົງທຶນພາຍໃນ ເຈົ້າຂອງກິດຈະການຕ້ອງ ແມ່ນຄົນລາວ,ຄົນຕ່າງດ້າວ ທີ່ບໍ່ມີສັນຊາດທີ່ດຳລົງ ຊີວິດຢູ່ລາວຖາວອນ.<br>- ຕ້ອງມີພາຫະນະໃຫ້ເຊົ່າ: ພາຫະນະລົດຍົນ 5 ຄັນຂຶ້ນໄປ, ລົດຈັກ 2 ລໍ້,3 ລໍ້ 10 ຄັນຂຶ້ນໄປ ແລະ ລົດຖີບ 20 ຂຶ້ນໄປ. ມາດຕະຖານເຕັກນິກ100%;ສຳລັບກົນຈັກໜັກຕ້ອງມີພາຫະນະໃຫ້ເຊົ່າຢ່າງໜ້ອຍ 5 ຄັນມີເຕັກນິກ 80% ຂຶ້ນໄປ.<br>- ຖ້າແມ່ນການລົງທຶນຕ່າງປະເທດ ຕ້ອງແມ່ນວິສາຫະກິດປະສົມ ລະຫວ່າງຜູ້ລົງທຶນພາຍໃນແລະຜູ້ລົງທຶນຕ່າງປະເທດ ເຊິ່ງຜູ້ລົງທຶນພາຍໃນຕ້ອງ ຖື ຮຸ້ນຫຼາຍ ກວ່າ 50% ຂອງທຶນທັງໝົດແລະ ມີອຳນາດຄຸ້ມຄອງທຸລະກິດຫຼາຍກວ່າ. |
| 5 | | • <u>ການດຳເນີນທຸລະກິດສະຖານີລົດຂົນສົ່ງໂດຍສານ.</u><br>- ພາຍໃນປະເທດ ແລະຫວ່າງປະເທດ | ສະຫງວນໄວ້ສະເພາະຄົນລາວ | - ຕ້ອງມີວິຊາການດ້ານຂົນສົ່ງຊັ້ນສູງຂຶ້ນໄປ20%ຂອງຈຳນວນພະນັກງານທັງໝົດ ແລະນຳໃຊ້ວິຊາການຄົນລາວ.<br>- ຕ້ອງມີທຶນຈົດທະບຽນຢ່າງໜ້ອຍ 1.5 ຕື້ກີບຂຶ້ນໄປ.<br>- ເຈົ້າຂອງກິດຈະການຕ້ອງແມ່ນຄົນລາວ,ຄົນຕ່າງດ້າວທີ່ບໍ່ມີສັນຊາດທີ່ດຳລົງຊີວິດຢູ່ລາວຖາວອນ. |
| | | • <u>ການດຳເນີນທຸລະກິດສະຖານີລົດຂົນສົ່ງ</u> | | - ຕ້ອງມີວິຊາການດ້ານຂົນສົ່ງຊັ້ນສູງຂຶ້ນໄປ 20% ຂອງຈຳພົນທັງ ໝົດ ແລະນຳໃຊ້ວິຊາການຄົນລາວ. |

| | | | | |
|---|---|---|---|---|
| 6 | | ສິນຄ້າ.<br>- ພາຍໃນ ປະເທດ, ລະ ຫວ່າງປະເທດ ແລະ ຜ່ານແດນ | ເປີດມີເງື່ອນໄຂ | - ຕ້ອງມີທຶນຈົດທະບຽນຢ່າງໜ້ອຍ 1.5 ຕື້ກີບຂຶ້ນໄປ ສຳລັບບໍລິການພາຍໃນປະເທດ, 3 ຕື້ກີບຂຶ້ນໄປສຳລັບບໍລິການລະຫວ່າງປະເທດແລະຜ່ານແດນ.<br>- ຖ້າແມ່ນການລົງທຶນພາຍໃນ ເຈົ້າຂອງກິດຈະການຕ້ອງແມ່ນຄົນລາວ,ຄົນຕ່າງດ້າວທີ່ບໍ່ມີສັນຊາດ,ດຳລົງຊີວິດຢູ່ລາວຖາວອນ.<br>- ຖ້າແມ່ນການລົງທຶນຕ່າງປະເທດຕ້ອງເປັນ ວິສາຫະກິດປະສົມ ລະຫວ່າງຜູ້ລົງທຶນພາຍໃນ ແລະ ຜູ້ ລົງທຶນຕ່າງປະເທດ ເຊິ່ງຜູ້ ລົງທຶນພາຍໃນຕ້ອງ ຖື ຮຸ້ນຫຼາຍກວ່າ 50% ຂອງທຶນທັງໝົດ ແລະ ມີອຳນາດຄຸ້ມຄອງ ທຸລະກິດ ຫຼາຍກວ່າ. |
| 7 | | • ການດຳເນີນທຸລະກິດການຂົນສົ່ງມວນຊົນ<br>- ເທດສະບານນະຄອນຫຼວງ, ຕົວເມືອງໃຫຍ່ | ເປີດມີເງື່ອນໄຂ | - ຕ້ອງມີວິຊາການດ້ານຂົນສົ່ງຊັ້ນສູງຂຶ້ນໄປ 20% ຂອງຈຳນວນພະນັກງານທັງໝົດ,<br>- ຕ້ອງມີທຶນຈົດທະບຽນຢ່າງໜ້ອຍ 1.5 ຕື້ກີບຂຶ້ນໄປ,ສຳລັບການລົງທຶນພາຍໃນ,3 ຕື້ກີບຂຶ້ນໄປສຳລັບລົງທຶນ ຕ່າງປະເທດ.<br>- ຖ້າແມ່ນການລົງທຶນພາຍໃນເຈົ້າຂອງກິດຈະການຕ້ອງແມ່ນຄົນລາວ,ຄົນຕ່າງດ້າວທີ່ບໍ່ມີສັນຊາດ,ດຳລົງຊີວິດຢູ່ລາວຖາວອນ.<br>- ຖ້າແມ່ນການລົງທຶນຕ່າງປະເທດ ຕ້ອງເປັນວິສາຫະກິດປະສົມລະຫວ່າງຜູ້ລົງທຶນພາຍໃນ ແລະ ຜູ້ລົງທຶນຕ່າງ ປະເທດ ຊຶ່ງຜູ້ລົງ ທຶນພາຍໃນຕ້ອງ ຖື ຮຸ້ນຫຼາຍ ກວ່າ 50% ຂອງທຶນທັງໝົດ ແລະມີອຳນາດຄຸ້ມຄອງທຸລະກິດຫຼາຍກວ່າ. |
| | ທຸລະກິດກ່ຽວກັບການຄຸ້ມຄອງພາຫະນະ ແລະ ກົນຈັກ | | | |
| | | • ການອະນຸຍາດນຳເຂົ້າຍານພາຫະນະແບບຊົ່ວ ຄາວ | ເປີດມີເງື່ອນໄຂ | • ໂຄງການຊ່ວຍເຫລືອລ້າຫລືກູ້ຢືມທີ່ລັດຖະບານຄຸ້ມຄອງ.<br>• ບໍລິສັດພາຍໃນ ຫລື ຕ່າງປະເທດ ທີ່ມີການລົງທຶນກ່ອນແລ້ວ ລັດຖະບານໃຊ້ໜີ້ຕາມຫລັງ (Tem key) ທີ່ມີສັນຍາກັນໄວ້<br>• ບໍລິສັດພາຍໃນຫລື ຕ່າງປະເທດທີ່ຊະນະການປະມູນສາກົນຕາມໂຄງການຂອງລັດຖະບານທີ່ໄດ້ບັນລຸສັນຍານຳກັນແລ້ວ.<br>• ບໍລິສັດຜູ້ຕາງໜ້າຫລືໂຄງການເພື່ອສຳຫລວດໃນການຂຸດຄົ້ນ ຫລື ອອກແບບຕ່າງໆທີ່ລັດຖະບານຮັບຮອງ.<br>ໝາຍເຫດ:<br>ໂດຍອີງໃສ່ມາດຕາ14ຂອງລັດຖະບັນຍັດຂອງປະ ທານປະເທດເລກທີ່:01/ສປປລ,ລົງວັນທີ່: 5/06/2003. |

| | | | | |
|---|---|---|---|---|
| 8 | | • ການອະນຸຍາດນຳເຂົ້າສິ້ນສ່ວນອາໄຫລ່ພາຫະນະ | ເປີດມີເງື່ອນໄຂ | • ຕ້ອງແມ່ນສິ້ນສ່ວນອາໄຫລ່ໃຫມ່100% ນັບທັງທີ່ວຈັກລົດ.<br>• ຕ້ອງມີເອກະສານຂອງຕົ້ນທາງ( ປະເທດທີ່ນຳອອກ ) ຢ່າງຄົບ ຖ້ວນເປັນທາງການ<br>• ມີບໍລິສັດແມ່(ເຈົ້າຂອງສິນຄ້າ)ທີ່ລັດຖະບານຂອງປະເທດນຳ ອອກ ຮັບຮອງຄັກແນ່.<br>• ໃຫ້ຖືກຕ້ອງຕາມຂໍ້ກຳນົດ, ຂໍ້ຕົກລົງ ລະບຽບການຂອງກະຊວງ ຍທຂ ວາງອອກແຕ່ລະໄລຍະ ທີ່ນຳໃຊ້ໄດ້.<br>• ບໍລິສັດທີ່ນຳເຂົ້າຕ້ອງມີໃບອະນຸຍາດດຳເນີນທຸລະກິດຄົບຖ້ວນ ຈາກກະຊວງທີ່ກ່ຽວຂ້ອງ. |
| | | • ການອະນຸຍາດທາງດ້ານ ເຕັກນິກນຳເຂົ້າ ພາຫະນະທຸກປະເພດ ແລະ ກົນຈັກກໍ່ ສ້າງ, ກົນຈັກກະ ສິກຳ | ເປີດມີເງື່ອນໄຂ | • ອີງໃສ່ຂໍ້ກຳນົດ, ຂໍ້ຕົກລົງ ລະບຽບການ ຂອງ ກະຊວງ ຍທຂ ວາງອອກແຕ່ລະໄລຍະທີ່ນຳໃຊ້ໄດ້<br>• ອີງໃສ່ແຈ້ງການ,ຂໍ້ຕົກລົງຫລືດຳລັດຂອງລັດຖະບານ ວາງອອກ ໃນແຕ່ລະໄລຍະ. |
| | | • ການອະນຸຍາດສ້າງຕັ້ງສູນກວດກາເຕັກນິກ ຍານພາ ຫະນະ | ເປີດມີເງື່ອນໄຂ | - ມີ ສະຖານທີ່ ເໝາະສົມ ແລະ ຮັບປະກັນສິ່ງແວດລ້ອມ.<br>- ໂຄງປະກອບສ້າງຂອງໂຮງງານທີ່ຖືກຕ້ອງຕາມ ລະບຽບການ ກະຊວງ ຍທຂ ວາງອອກ.<br>- ມີເຄື່ອງມືອຸປະກອນທີ່ທັນສະໄໝທຽບເທົ່າສາກົນ.<br>- ເປັນການລົງທຶນພາຍໃນ,ປະສົມກັບຕ່າງປະເທດຫຼືລົງ ທຶນຕ່າງປະເທດໄດ້ 100% ,ແຕ່ຕ້ອງມີທຶນຈົດທະບຽນ 1 ຕື້ຂຶ້ນໄປ. |
| | | • ການອະນຸຍາດສ້າງຕັ້ງອູ່ ສ້ອມແປງ ຍານພາຫະນະ | ເປີດມີເງື່ອນໄຂ | - ມີ ສະຖານທີ່ ເໝາະສົມ ແລະ ຮັບປະກັນສິ່ງແວດລ້ອມ.<br>- ໂຄງປະກອບສ້າງຂອງໂຮງງານທີ່ຖືກຕ້ອງຕາມ ລະບຽບການ ກະຊວງ ຍທຂ ວາງອອກ.<br>- ມີເຄື່ອງມືອຸປະກອນທີ່ທັນສະໄໝທຽບເທົ່າສາກົນ.<br>- ເປັນການລົງທຶນພາຍໃນ,ປະສົມກັບຕ່າງປະເທດຫຼື ລົງທຶນຕ່າງປະເທດໄດ້ 100% ,ແຕ່ຕ້ອງມີທຶນຈົດທະບຽນ 1 ຕື້ຂຶ້ນໄປ. |
| 9 | | • ອູ່ສ້ອມແປງລົດ<br>- ພາຫະນະທົ່ວໄປ<br>- ພາຫະນະກົນຈັກໜັກ | ເປີດມີເງື່ອນໄຂ | - ມີ ສະຖານທີ່ ເໝາະສົມ ແລະ ຮັບປະກັນສິ່ງແວດລ້ອມ.<br>- ໂຄງປະກອບສ້າງຂອງໂຮງງານທີ່ຖືກຕ້ອງຕາມ ລະບຽບການ ກະຊວງ ຍທຂ ວາງອອກ.<br>- ມີເຄື່ອງມືອຸປະກອນທີ່ທັນສະໄໝທຽບເທົ່າສາກົນ.<br>- ເປັນການລົງທຶນພາຍໃນ, ປະສົມກັບຕ່າງປະເທດ ຫຼື ລົງທຶນຕ່າງປະເທດໄດ້ 100% ,ແຕ່ຕ້ອງມີທຶນຈົດທະບຽນ 1,5 ຕື້ຂຶ້ນໄປ. |

| | ທຸລະກິດກ່ຽວກັບຈະລາຈອນ | | |
|---|---|---|---|
| 10 | • <u>ໂຮງຮຽນສອນຂັບລົດ</u><br><br>- ພາຫະນະທົ່ວໄປ | ສະຫງວນໄວ້ສະເພາະຄົນລາວ | - ລະດັບຜູ້ບໍລິຫານຕ້ອງຈົບວິຊາສະເພາະກົນຈັກຊັ້ນກາງ<br>- ມີຄູສອນພາກທິດສະດີຢ່າງໜ້ອຍ 1 ຄົນ ຈົບວິຊາສະເພາະກົນຈັກ, ຜ່ານການຝຶກອົບຮົມການສິດສອນຢ່າງຖືກຕ້ອງ.<br>- ມີຄູສອນພາກປະຕິບັດຕົວຈິງຢ່າງໜ້ອຍສອງຄົນມີໃບຂັບຂີ່ປະເພດ C ເປັນຢ່າງຕ່ຳ ມີປະສົບການໃນການຂັບຂີ່ຢ່າງໜ້ອຍ 5 ປີ.<br>- ມີທີ່ຕັ້ງ ແລະ ສິ່ງປຸກສ້າງແບບຖາວອນ, ມີຫ້ອງການ, ຫ້ອງຮຽນ, ເດີ່ນຝຶກແອບທີ່ກວ້າງຂວາງ<br>- ມີພາຫະນະຮຽນຂັບຢ່າງໜ້ອຍ 3 ຄັນ<br>- ມີເອກະສານຄູ່ມືການສິດສອນທີ່ຜ່ານການຮັບຮູ້ໂດຍກົມຂົນສົ່ງ<br>- ມີທຶນທັງໝົດຫລາຍກວ່າ 500 ລ້ານກີບ |
| 11 | - ພາຫະນະກົນຈັກໜັກ | ເປີດມີເງື່ອນໄຂ | - ລະດັບຜູ້ບໍລິຫານຕ້ອງຈົບວິຊາສະເພາະກົນຈັກຊັ້ນ ສູງຂຶ້ນໄປ.<br>- ມີຄູສອນພາກທິດສະດີ ແລະພາກປະຕິບັດຕົວຈິງສະເພາະກົນຈັກໜັກ,<br>- ຕ້ອງມີເດີ່ນຝຶກແອບການຂັບຂີ່.<br>- ມີພາຫະນະຮຽນຂັບ 5 ສະນິດຂຶ້ນໄປ,ຕາມລະບຽບສ້າງຕັ້ງຂອງ ກະຊວງ ຍທຂ ວາງອອກ<br>- ມີເອກະສານຄູ່ມືການສິດສອນທີ່ຜ່ານການຮັບຮອງຈາກສະຖາບັນ.<br>- ມີທຶນຈົດທະບຽນ 1,5 ຕື້ກີບ ຂຶ້ນໄປ.<br>- ເປັນການລົງທຶນພາຍໃນ, ປະສົມກັບຕ່າງປະເທດ ຫຼື ລົງທຶນຕ່າງປະເທດໄດ້ 100%. |
| 12 | <u>ຜະລິດ ແລະ ຕິດຕັ້ງປ້າຍຈະລາຈອນ</u> | ສະຫງວນໄວ້ສະເພາະຄົນລາວ | - ລະດັບຜູ້ບໍລິຫານຕ້ອງມີຄວາມຮູ້ພື້ນຖານດ້ານຂົວທາງ, ວິສະວະກຳການຈະລາຈອນ.<br>- ມີທີມງານວິຊາການທີ່ໄດ້ຜ່ານການຝຶກອົບຮົມກ່ຽວກັບວິສະວະກຳການຈະລາຈອນ,<br>- ມີເຄື່ອງມືແລະ ອຸປະກອນຜະລິດ ແລະ ຕິດຕັ້ງປ້າຍທີ່ທັນສະໄໝ |
| 13 | <u>ອອກແບບ ແລະ ສຳຫລວດການຈະລາຈອນ</u> | ເປີດມີເງື່ອນໄຂ | - ລະດັບຜູ້ບໍລິຫານຕ້ອງມີຄວາມຮູ້ພື້ນຖານດ້ານຂົວທາງ, ວິສະວະກຳການຈະລາຈອນຢ່າງໜ້ອຍຊັ້ນກາງຂຶ້ນໄປ.<br>- ມີທີມງານວິຊາການທີ່ໄດ້ຜ່ານການຝຶກອົບຮົມກ່ຽວກັບວິສະວະກຳການຈະລາຈອນ,<br>- ມີເຄື່ອງມືແລະອຸປະກອນເຄື່ອງມືສຳຫຼວດອອກແບບທີ່ |

| | | | | |
|---|---|---|---|---|
| | | | | ທັນສະໄໝ |
| 14 | | **ແຕ້ມເສັ້ນ ແລະ ເຄື່ອງໝາຍຈະລາຈອນ** | ເປີດມີເງື່ອນໄຂ | - ລະດັບຜູ້ບໍລິຫານຕ້ອງມີຄວາມຮູ້ພື້ນຖານດ້ານຂົວທາງ, ວິສະວະກຳການຈະລາຈອນ.<br>- ມີທີມງານວິຊາການທີ່ໄດ້ຜ່ານການຝຶກອົບຮົມກ່ຽວກັບ ວິສະວະກຳການຈະລາຈອນ, ແລະມີປະສົບການມາແລ້ວ 3 ປີ ຂຶ້ນໄປ.<br>- ມີເຄື່ອງມື ແລະ ອຸປະກອນແຕ້ມເສັ້ນທີ່ທັນສະໄໝ |
| 15 | | **ກວດສອບຄວາມປອດໄພຂອງເສັ້ນທາງ** | ເປີດມີເງື່ອນໄຂ | - ລະດັບຜູ້ບໍລິຫານຕ້ອງມີຄວາມຮູ້ພື້ນຖານດ້ານຂົວທາງ, ວິສະວະກຳການຈະລາຈອນ.<br>- ມີທີມງານວິຊາການທີ່ໄດ້ຜ່ານການຝຶກອົບຮົມກ່ຽວກັບ ວິສະວະກຳການຈະລາຈອນ, ມີຄວາມຊຳນານ ແລະ ມີປະສົບການຢ່າງໜ້ອຍ 3 ປີ |

ດັ່ງນັ້ນ,ຈຶ່ງສະເໜີແຈ້ງມາຍັງທ່ານຊາບຕາມທາງຄວນດ້ວຍ

ລັດຖະມົນຕີ

ວຽງສະຫວັດ ສີພັນດອນ

Khamhen Meng